ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 87 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 15 ມີນາ 2022

# ດຳລັດ

## ວ່າດ້ວຍ ການສ້າງຕັ້ງ ປ່າສະຫງວນແຫ່ງຊາດຍອດນ້ຳໂມ້-ພູສາມສຸມ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍ ປ່າສະຫງວນແຫ່ງຊາດ ສະບັບເລກທີ 134/ລບ, ລົງວັນທີ 13 ພຶດສະພາ 2015;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0233/ກປ, ລົງວັນທີ 03 ກຸມພາ 2022.

## ນາຍົກລັດຖະມົນຕີ ອອກດຳລັດ:

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ວາງອອກ ເພື່ອປະກາດສ້າງຕັ້ງ ປ່າສະຫງວນແຫ່ງຊາດຍອດນ້ຳໂມ້-ພູສາມສຸມ ແນໃສ່ ຄຸ້ມຄອງ, ປົກປັກຮັກສາ ລັກສະນະສະເພາະທີ່ໂດດເດັ່ນ ພູມສັນຖານ ເປັນຜາສູງ, ຫີນເປັນຊັ້ນໆ, ປ່າດົງດິບ, ປ່າໄມ້ຮົ້ງຫອມ, ໄມ້ໂລ່ງເລງ, ພູມີທົ່ງຫຍ້າ, ຫຼາກຫຼາຍທາງດ້ານຊີວະນາງພັນ, ຖິ່ນທີ່ຢູ່ອາໄສຂອງພັນສັດ, ພັນພືດ ແລະ ເຄື່ອງປ່າຂອງດົງ, ຮ່ອງຮອຍປະຫວັດສາດ ແລະ ວັດທະນະທຳ ທີ່ມີຄວາມສຳຄັນທາງດ້ານການທ່ອງທ່ຽວ ອະນຸລັກຮັກສາໄວ້ຄວາມສວຍສົດງົດງາມ ຂອງທິວທັດທຳມະຊາດ, ສຶກສາຄົ້ນຄວ້າທາງດ້ານວິທະຍາສາດ ປະກອບສ່ວນເຂົ້າໃນການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ແລະ ພັດທະນາ ເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ.

### ມາດຕາ 2 ທີ່ຕັ້ງ, ຂອບເຂດ ແລະ ເນື້ອທີ່ ປ່າສະຫງວນແຫ່ງຊາດຍອດນ້ຳໂມ້-ພູສາມສຸມ

ປ່າສະຫງວນແຫ່ງຊາດຍອດນ້ຳໂມ້-ພູສາມສຸມ ຕັ້ງຢູ່ພາກເໜືອ ກວມເອົາແຂວງຊຽງຂວາງ ມີ 2 ເມືອງ ຄື: ເມືອງຄູນ ແລະ ເມືອງໝອກ ຊຶ່ງຢູ່ໃນລະຫວ່າງ ເສັ້ນແວງ ແລະ ເສັ້ນຂະໜານ ດັ່ງນີ້:

| | | |
|---|---|---|
| ທິດເໜືອ | ເສັ້ນແວງ | 103°54'01"E; |
| | ເສັ້ນຂະໜານ | 19°18'32"N; |
| ທິດຕາເວັນອອກ | ເສັ້ນແວງ | 104°16'52"E; |
| | ເສັ້ນຂະໜານ | 19°06'46"N; |
| ທິດໃຕ້ | ເສັ້ນແວງ | 103°53'58"E; |
| | ເສັ້ນຂະໜານ | 18°59'31"N; |
| ທິດຕາເວັນຕົກ | ເສັ້ນແວງ | 103°37'31"E; |
| | ເສັ້ນຂະໜານ | 19°05'03"N. |

ຂອບປ່າສະຫງວນແຫ່ງຊາດຍອດນ້ຳໂມ້-ພູສາມສຸມ ໃຫ້ອີງໃສ່ແຜນທີ່ພູມີປະເທດ ມາດຕາສ່ວນ 1:100.000 ໂດຍຖືເອົາ ເສັ້ນແວງ ແລະ ເສັ້ນຂະໜານ ເປັນຫຼັກ ສົມທຽບໃສ່ກັບພື້ນທີ່ຕົວຈິງ ເຊັ່ນ ສັນພູ (ສັນປັນນ້ຳ), ຕີນພູ, ແມ່ນ້ຳ, ສາຍຫ້ວຍ, ເສັ້ນທາງ ເປັນຂີດໝາຍຂອບເຂດ ເພື່ອໃຫ້ອົງການປົກຄອງທ້ອງຖິ່ນ ຕະຫຼອດຮອດປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ເປັນຢ່າງດີ.

ປ່າສະຫງວນແຫ່ງຊາດຍອດນ້ຳໂມ້-ພູສາມສຸມ ມີເນື້ອທີ່ທັງໝົດ 98.873 ຮຕ (ເກົ້າສິບແປດພັນ ແປດຮ້ອຍເຈັດສິບສາມ ເຮັກຕາ) ເມືອງໝອກ ກວມເອົາ 86.598 ຮຕ (ແປດສິບຫົກພັນ ຫ້າຮ້ອຍເກົ້າສິບແປດເຮັກຕາ), ເມືອງຄູນ ກວມເອົາ 12.275 ຮຕ (ສິບສອງພັນ ສອງຮ້ອຍເຈັດສິບຫ້າ ເຮັກຕາ).

ທີ່ຕັ້ງ ແລະ ເນື້ອທີ່ ຂອງປ່າສະຫງວນແຫ່ງຊາດຍອດນ້ຳໂມ້-ພູສາມສຸມ ໄດ້ສະແດງໃຫ້ເຫັນຢູ່ໃນແຜນທີ່ມາດຕາສ່ວນ 1:180.000 ທີ່ຄັດຕິດມາພ້ອມນີ້.

**ມາດຕາ 3 ການຄຸ້ມຄອງ**

ການຄຸ້ມຄອງ ປ່າສະຫງວນແຫ່ງຊາດຍອດນ້ຳໂມ້-ພູສາມສຸມ ມີ ກອງຄຸ້ມຄອງປ່າສະຫງວນແຫ່ງຊາດຍອດນ້ຳໂມ້-ພູສາມສຸມ. ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງກອງຄຸ້ມຄອງດັ່ງກ່າວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 4 ແຫຼ່ງທຶນ**

ແຫຼ່ງທຶນທີ່ນຳໃຊ້ເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ປ່າສະຫງວນແຫ່ງຊາດຍອດ ນ້ຳໂມ້-ພູສາມສຸມ ມີດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປົກປັກຮັກສາປ່າໄມ້;
3. ກອງທຶນປົກປັກຮັກສາສິ່ງແວດລ້ອມ;
4. ການປະກອບທຶນຂອງກິດຈະການ ຫຼື ໂຄງການທີ່ດຳເນີນຢູ່ໃນເຂດປ່າສະຫງວນແຫ່ງຊາດ ຫຼື ພື້ນທີ່ໃກ້ຄຽງ ທີ່ສົ່ງຜົນກະທົບຕໍ່ ປ່າສະຫງວນແຫ່ງຊາດ;
5. ກອງທຶນທ່ອງທ່ຽວ ແຫ່ງຊາດ;
6. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
7. ແຫຼ່ງທຶນອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 5 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 6 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນໄດ້ລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ພັນຄຳ ວິພາວັນ**